# ບົດລາຍງານ

**ຂອງ ທ່ານ ສຈ.ດຣ ບໍ່ແສງຄໍາ ວົງດາລາ, ລັດຖະມົນຕີກະຊວງ ຖວທ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII, ຄັ້ງວັນທີ 6 ມິຖຸນາ ປີ 2019.**

**ຂໍຮຽນ: ທ່ານ ປະທານ ສະພາແຫ່ງຊາດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
**ຂໍຮຽນ: ບັນດາທ່ານຮອງປະທານສະພາແຫ່ງຊາດ, ສະມາຊິກ ສະພາແຫ່ງຊາດ, ທ່ານທີ່ມີກຽດ ທ່ານຍິງ, ທ່ານຊາຍ ທີ່ນັບຖື ແລະ ຮັກແພງ.**

ມື້ນີ້, ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບອະນຸຍາດຈາກທ່ານປະທານສະພາແຫ່ງຊາດໃຫ້ຂຶ້ນມາ ລາຍງານເຖິງການປະຕິບັດໜ້າທີ່ວຽກງານຂອງກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບອົກຂອບໃຈອັນລົ້ນເຫຼືອມາຍັງທ່ານປະທານກອງປະຊຸມ ບັນດາທ່ານຄະນະປະທານ ບັນດາທ່ານສະມາຊິກສະພາແຫ່ງຊາດທັງຫຼາຍ ທີ່ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ຢ່າງໃກ້ຊິດຕິດແທດ ໃນຂົງເຂດວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ອັນໄດ້ສະແດງອອກໃນການອະນຸຍາດໃຫ້ຂ້າພະເຈົ້າ ໄດ້ຂຶ້ນມາລາຍງານຕໍ່ກອງປະຊຸມສະພາແຫ່ງຊາດໃນຄັ້ງນີ້, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 17 ພະຈິກ 2017 ກ່ຽວກັບວຽກງານທ່ອງທ່ຽວ ຕິດພັນກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ-ຈີນ 2019. ຂ້າພະເຈົ້າຂໍອະນຸຍາດລາຍງານໂດຍສັງເຂບຄືດັ່ງນີ້:

## I. ສະພາບລວມ

ລັດຖະບານ ສປປ ລາວ ກໍ່ຄືສະພາແຫ່ງຊາດ ໄດ້ຖືເອົາວຽກງານການທ່ອງທ່ຽວເປັນຂະແໜງພື້ນຖານເສດຖະກິດຂະແໜງໜຶ່ງ ແລະ ເປັນກໍາລັງແຮງຍູ້ດັນ, ຂັບເຄື່ອນການຂະຫຍາຍຕົວເສດຖະກິດຂອງປະເທດ, ດັ່ງນັ້ນຈຶ່ງໄດ້ເຫັນດີຕົກລົງອະນຸມັດໃຫ້ຈັດປີທ່ອງທ່ຽວລາວ 2018 ຂຶ້ນ ແລະ ຖືເປັນໜ້າທີ່ຂອງທຸກຂະແໜງການນັບທັງສູນກາງ ແລະ ທ້ອງຖິ່ນ, ທັງພາກລັດ, ພາກທຸລະກິດ ແລະ ທົ່ວປວງຊົນ. ພິທີເປີດປີທ່ອງທ່ຽວລາວ 2018 ໄດ້ຈັດຂຶ້ນໃນວັນທີ 28 ຕຸລາ 2017 ເຊິ່ງກົງກັບງານສະເຫລີມສະຫລອງບຸນນະມັດສະການພະທາດຫລວງ ໂດຍການເປັນກຽດເຂົ້າຮ່ວມ ຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພ້ອມດ້ວຍບັນດາທ່ານຜູ້ນໍາພັກ-ລັດ ແລະ ແຂກທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມເປັນຈໍານວນຢ່າງຫຼວງຫຼາຍ.

ກະຊວງຖະແຫຼງຂ່າວ,ວັດທະນະທໍາ ແລະ ທ່ອງທ່ຽວ ກໍ່ໄດ້ເອົາໃຈໃສ່ເປັນເຈົ້າການ ໃນການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຢ່າງຕັ້ງໜ້າເພື່ອພ້ອມກັນແກ້ໄຂບັນດາສິ່ງອັດຕັນທີ່ເປັນອຸປະສັກຕໍ່ວຽກງານພັດທະນາການທ່ອງທ່ຽວ ແລະ ພ້ອມກັນ ກໍານົດບັນດາກິດຈະກໍາທ່ອງທ່ຽວຕ່າງໆ ໃຫ້ມີຄວາມຫຼາກຫຼາຍ ເພື່ອເປັນການໂຄສະນາດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາທ່ຽວຊົມປະເທດລາວໃຫ້ຫຼາຍຂຶ້ນ.

ໃນປີ 2018 ຜ່ານມາ ໄດ້ມີການຈັດກິດຈະກໍາສົ່ງເສີມການທ່ອງທ່ຽວຢ່າງຕັ້ງໜ້າ ແລະ ເປັນຂະບວນຄຶກຄື້ນໃນທົ່ວປະເທດ, ຢູ່ບັນດາແຂວງກໍ່ໄດ້ສ້າງກິດຈະກໍາການທ່ອງທ່ຽວພາຍໃນແຂວງ ຕະຫຼອດຮອດຂັ້ນເມືອງຕາມສະພາບທ່າແຮງດ້ານການທ່ອງທ່ຽວຂອງຕົນ ຢ່າງເປັນຂະບວນຟົດຟື້ນ ເຊັ່ນ: ງານສະເຫຼີມສະຫຼອງ ເມືອງວຽງໄຊ ຖານທີ່ໝັ້ນຂອງການປະຕິວັດລາວ ຄົບຮອບ 50 ປີ, ງານບຸນຊ້າງ ທີ່ແຂວງໄຊຍະບູລີ, ງານເທດສະການດອກງິ້ວບານ ທີ່ແຂວງບໍ່ແກ້ວ, ງານບຸນພຣະທາດອິງຮັງ ແຂວງສະຫວັນນະເຂດ, ງານບຸນຜາສາດຫີນວັດພູ ແຂວງຈໍາປາສັກ ແລະ ງານອື່ນໆ, ຊຶ່ງໃນງານຕ່າງໆນັ້ນ ກໍ່ໄດ້ມີການນໍາຂັ້ນສູງຂອງພັກ-ລັດຖະບານ, ສະພາແຫ່ງຊາດໄດ້ໃຫ້ກຽດເຂົ້າຮ່ວມ, ຄຽງຄູ່ກັນນັ້ນ, ລັດຖະບານກໍ່ໄດ້ສະໜອງງົບປະມານ ແລະ ມີນະໂຍບາຍພິເສດຈໍານວນໜຶ່ງ ເຊັ່ນ: ໄດ້ຍົກເວັ້ນວີຊາໃຫ້ແກ່ 4 ປະເທດ ຄື: ປະເທດເດນມາກ, ນອກແວ, ແຟງລັງ ແລະ ຊູແອດ.

**II. ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 17 ພະຈິກ 2017.**

**1.** ໂດຍຜ່ານການໂຄສະນາຢ່າງກວ້າງຂວາງທັງພາຍໃນ ແລະ ຕ່າງປະເທດ, ພ້ອມກັບການຈັດກິດຈະກຳສຳຄັນຕ່າງໆ ຈຶ່ງສາມາດດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ ໃນປີ 2018 ມີຈຳນວນ 4,186,432 ເທື່ອຄົນ ເພີ່ມຂຶ້ນ 8,2% ທຽບໃສ່ປີ 2017, ສາມາດສ້າງລາຍຮັບໄດ້ເຖິງ 811,010,661 ໂດລາສະຫະລັດ ເພີ່ມຂຶ້ນ 25% ທຽບໃສ່ປີ 2017.

ສ່ວນນັກທ່ອງທ່ຽວພາຍໃນ (ລາວທ່ຽວລາວ) ມີຈຳນວນທັງໝົດ 2.818.576 ເທື່ອຄົນ, ເພີ່ມຂຶ້ນ 26% ເມື່ອທຽບໃສປີ 2017, ສ້າງເງິນໝູນວຽນພາຍປະເທດໄດ້ປະມານ 3,920 ຕື້ກີບ ຫຼື ເທົ່າກັບ 461 ລ້ານໂດລາສະຫະລັດ, ຖ້າລວມນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດແລ້ວແມ່ນມີຈຳນວນ 7 ລ້ານກວ່າເທື່ອຄົນ.

ເຖິງວ່າປີ 2018 ບໍ່ໄດ້ຕາມຄາດໝາຍສູ້ຊົນ ຄືບໍ່ໃຫ້ຫຼຸດ 5 ລ້ານເທື່ອຄົນ ແລະ ສ້າງລາຍຮັບໃຫ້ໄດ້ປະມານ 900 ລ້ານໂດລາສະຫະລັດ, ກໍ່ຍ້ອນມາຈາກສາເຫດໃນໂຕ ແລະ ນອກໂຕ, ແຕ່ໂດຍລວມແລ້ວເຫັນວ່າເປັນສິ່ງທີ່ໜ້າເພິ່ງພໍໃຈ ແລະ ອັນສຳຄັນທີ່ສຸດແມ່ນສາມາດສ້າງໄດ້ບັນຍາກາດຟົດຟື້ນ ຂອງ ປີທ່ອງທ່ຽວລາວ 2018 ດ້ວຍການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ໃນທົ່ວປະເທດເພື່ອເປັນການຮອງຮັບປີທ່ອງທ່ຽວ ລາວ-ຈີນ 2019 ແລະ ການພັດທະນາວຽກງານການທ່ອງທ່ຽວໃນຕໍ່ໜ້າ.

**2. ການປັບປຸງ ແລະ ສ້າງບັນດານິຕິກຳລຸ່ມກົດໝາຍ** ທີ່ຈຳເປັນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ, ສົ່ງເສີມວຽກງານທ່ອງທ່ຽວ, ສາມາດສ້າງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ມີຜົນບັງຄັບໃຊ້ສະເພາະ ຕໍ່ວຽກງານການທ່ອງທ່ຽວ ມີທັງໝົດ 8 ສະບັບ ໃນນັ້ນມີກົດໝາຍວ່າດ້ວຍການທ່ອງທ່ຽວ 1 ສະບັບ, ດຳລັດ 2 ສະບັບຄື: ດຳລັດວ່າດ້ວຍກອງທຶນການທ່ອງທ່ຽວ, ດຳລັດວ່າດ້ວຍການບັນເທີງ ແລະ ມີຂໍ້ຕົກລົງຂອງລັດຖະມົນຕີ 5 ສະບັບ ຄື:

- ການຄຸ້ມຄອງໂຮງແຮມ,ຣີສອດ ແລະ ເຮືອນພັກ;
- ການຄຸ້ມຄອງບໍລິສັດທ່ອງທ່ຽວ;
- ການຄຸ້ມຄອງທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ ແລະ ຮ້ານກິນດື່ມ;
- ການຄຸ້ມຄອງພະນັກງານນຳທ່ຽວ;
- ການຈັດລະດັບມາດຕະຖານໂຮງແຮມ, ຣີສອດ ແລະ ເຮືອນພັກ.

ສຳລັບລະບຽບການຄຸ້ມຄອງເຂດທ່ອງທ່ຽວ ແລະ ເມືອງທ່ອງທ່ຽວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ແລະ 73 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວສະບັບປັບປຸງ ແມ່ນໄດ້ຮ່າງ ແລະ ກຳລັງຄົ້ນຄວ້າຜ່ານຂັ້ນຕອນ. ສ່ວນການປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຕຳຫຼວດທ່ອງທ່ຽວນັ້ນ ໄດ້ຮັບຊາບວ່າ ກະຊວງປ້ອງກັນຄວາມສະຫງົບ ກໍ່ກຳລັງຄົ້ນຄວ້າປັບປຸງເຊັ່ນດຽວກັນ.

ຂະແໜງ ຖວທ ໄດ້ສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງສະມາຄົມທຸລະກິດການທ່ອງທ່ຽວລາວ ແລະ ສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ.

ປັດຈຸບັນ, ໃນທົ່ວປະເທດ ມີສະຖານທີ່ພັກແຮມທັງໝົດ 3,102 ແຫ່ງ ມີ 56,825 ຫ້ອງ, ໃນນັ້ນມີ ໂຮງແຮມ 670 ແຫ່ງ ມີ 23,717 ຫ້ອງ, ຣີສອດ ແລະ ເຮືອນພັກ ມີ 2,432 ແຫ່ງ ມີ 33,108 ຫ້ອງ, ນອກນັ້ນ, ຍັງມີເຮືອນພັກແຮມປະຊາຊົນ (Homestay) ມີຈຳນວນ 240 ຫຼັງ ກວມເອົາ 27 ບ້ານ, 21 ເມືອງ, ມີບໍລິສັດທ່ອງທ່ຽວ 503 ບໍລິສັດ, ສາຂາບໍລິສັດທ່ອງທ່ຽວ ມີ 36 ສາຂາ.

ໄດ້ມີການຈັດລະດັບມາດຕະຖານໂຮງແຮມ 5 ດາວ ໄດ້ 5 ແຫ່ງ, ໂຮງແຮມ 4 ດາວ 16 ແຫ່ງ, ໂຮງແຮມ 3 ດາວ 23 ແຫ່ງ, ໂຮງແຮມ 2 ດາວ 18 ແຫ່ງ ແລະ ໂຮງແຮມ 1 ດາວ 14 ແຫ່ງ; ຈັດລະດັບມາດຕະຖານ ເຮືອນພັກ ດ້ວຍເຄື່ອງໝາຍດອກຈຳປາ ປະເພດ I ໄດ້ 11 ແຫ່ງ, ປະເພດ 2 ໄດ້ 27 ແຫ່ງ, ປະເພດ 3 ໄດ້ 20 ແຫ່ງ.

ນອກນີ້, ໃນປີ 2018 ບັນດາຫົວໜ່ວຍທຸລະກິດບໍລິການດ້ານການທ່ອງທ່ຽວຂອງ ສປປ ລາວ ໄດ້ຮັບລາງວັນມາດຕະຖານການທ່ອງທ່ຽວອາຊຽນ ຈຳນວນໜຶ່ງເຊັ່ນ:

- ລາງວັນມາດຕະຖານໂຮງແຮມຂຽວອາຊຽນ 48 ແຫ່ງ.
- ລາງວັນມາດຕະຖານການພັກແຮມນຳເຮືອນປະຊາຊົນອາຊຽນ (Homestay) 14 ແຫ່ງ.
- ລາງວັນມາດຕະຖານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມອາຊຽນ 10 ແຫ່ງ.
- ລາງວັນມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ 1 ແຫ່ງ.
- ລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ 5 ແຫ່ງ.
- ລາງວັນມາດຕະຖານການບໍລິການສະປາອາຊຽນ 5 ແຫ່ງ.
- ລາງວັນມາດຕະຖານຫ້ອງນ້ຳສາທາລະນະອາຊຽນ 4 ແຫ່ງ.
- ລາງວັນການທ່ອງທ່ຽວແບບຍືນຍົງ ອາຊຽນ 2 ແຫ່ງ.

**3. ການສຳຫຼວດ, ພັດທະນາ ແລະ ຂະຫຍາຍກິດຈະການການທ່ອງທ່ຽວ ມີດັ່ງນີ້:**

ຮອດປີ 2018 ໄດ້ສຳເລັດການສຳຫຼວດ ແລະ ກຳນົດບູລິມະສິດໃນການພັດທະນາແຫຼ່ງທ່ອງທ່ຽວ ຢູ່ບັນດາແຂວງທົ່ວປະເທດ ໄດ້ທັງໝົດ 45 ແຫ່ງ, ໄດ້ດຳເນີນການກໍ່ສ້າງເສັ້ນທາງປູຢາງ ແຕ່ທາງແຍກບ້ານຊ່າງໄຫ ຫາ ບ້ານ ປາກອູ, ເມືອງປາກອູ, ກໍ່ສ້າງທ່າເຮືອບັກ ທີ່ບ້ານຈອມເພັດ, ເມືອງຈອມເພັດ ແຂວງຫລວງພະບາງ, ການກໍ່ສ້າງເສັ້ນທາງປູຢາງ ແຕ່ສາມແຍກທາງເລກທີ 12 ໄປຫາ ຖ້ຳຊ້າງ, ກໍ່ສ້າງສິ່ງອຳນວຍຄວາມສະດວກ ໃນບໍລິເວນພະທາດສີໂຄດຕະບອງ, ເມືອງທ່າແຂກ, ແຂວງຄຳມ່ວນ ຊຶ່ງປະກອບດ້ວຍ ຂົວຂ້າມຫ້ວຍ, ເສັ້ນທາງພາຍໃນເດີ່ນພະທາດ, ບ່ອນຈອດລົດ, ຮ້ານຂາຍເຄື່ອງທີ່ລະນຶກ, ຫ້ອງວາງສະແດງ ແລະ ສະໜອງຂໍ້ມູນຂ່າວສານການທ່ອງທ່ຽວ, ກໍ່ສ້າງເສັ້ນທາງປູຢາງ ແຕ່ເທດສະບານເມືອງໄຊ ຫາຖ້ຳຈອມອອງ, ແຂວງອຸດົມໄຊ ຄວາມຍາວ 39 ກິໂລແມັດ, ນອກນັ້ນຢູ່ບັນດາແຂວງ ກໍ່ໄດ້ມີການກໍ່ສ້າງເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກເຂົ້າຫາແຫຼ່ງທ່ອງທ່ຽວ ດ້ວຍງົບປະມານຂອງລັດ ແລະ ຂອງພາກສ່ວນສັງຄົມຕ່າງໆ.

ລັດຖະບານ ໄດ້ອະນຸຍາດໃຫ້ມີການເປີດເສັ້ນທາງການບິນໃໝ່ ຂອງ ສປປ ລາວ ໄປຕ່າງປະເທດ ແລະ ຕ່າງປະເທດເຂົ້າມາ ສປປ ລາວ ເຊັ່ນ: ໄທ, ສປ ຈີນ, ສສ ຫວຽດນາມ, ສ. ເກົາຫຼີ, ກຳປູເຈຍ ແລະ ສິງກະໂປ, ຂະຫຍາຍສະໜາມບິນສາກົນວັດໄຕ ແລະ ຫຼວງພະບາງ ເພື່ອຮອງຮັບຈຳນວນນັກທ່ອງທ່ຽວທີ່ເພີ່ມຂຶ້ນ ແລະ ປັບປຸງດ່ານສາກົນ 27 ດ່ານ; ດ່ານທ້ອງຖິ່ນ 32 ດ່ານ ແລະ ດ່ານປະເພນີ 48 ດ່ານ (ລວມທັງໝົດ 107ດ່ານ).

ຈາກຜົນງານດັ່ງກ່າວໄດ້ມີການຄັດເລືອກ ແລະ ມອບລາງວັນການທ່ອງທ່ຽວດີເດັ່ນ ແລະ ຍືນຍົງຂອງ ສປປ ລາວ ໃນໂອກາດສະຫລຸບ ປີທ່ອງທ່ຽວລາວ 2018 ຊຶ່ງມີຈຳນວນຜູ້ປະກອບການທຸລະກິດທ່ອງທ່ຽວທີ່ໄດ້ຮັບລາງວັນ 127 ລາງວັນ.

**4. ວຽກງານໂຄສະນາການທ່ອງທ່ຽວຢູ່ພາຍໃນ ແລະ ຕ່າງປະເທດ**

ໄດ້ໂຄສະນາຜ່ານສື່ມວນຊົນ ຢູ່ພາຍໃນ ເຊັ່ນ: ໂທລະພາບ, ວິທະຍຸ, ໜັງສືພິມ, ວາລະສານ, ຜ່ານສື່ສັງຄົມອອນລາຍ, ປ້າຍໂຄສະນາ, ຈໍ LED ຕາມຈຸດຕ່າງໆ ໃນທົ່ວປະເທດ; ຜະລິດແຜ່ນພັບ, ປຶ້ມແຫຼ່ງທ່ອງທ່ຽວອັນໂດດເດັ່ນຂອງລາວ , ແຜນທີ່ແຫຼ່ງທ່ອງທ່ຽວ, ປຶ້ມແນະນຳການທ່ອງທ່ຽວ ແລະ ສິ່ງພິມໂຄສະນາອື່ນໆ; ໄດ້ແຕ່ງບົດເພງ, ບົດຟ້ອນ, ກາບກອນ, ກາວີ ຈຳນວນຫຼວງຫຼາຍ ເພື່ອສະແດງຢູ່ທັງພາຍໃນ ແລະ ຕ່າງປະເທດຢ່າງເປັນຂະບວນຟົດຟື້ນ.

ໄດ້ໂຄສະນາຜ່ານສື່ມວນຊົນຕ່າງປະເທດ ເຊັ່ນ: ສື່ອອນລາຍ, ເວັບໄຊ, ວາລະສານ ຂອງບໍລິສັດ International BIZ News ຂອງເຢຍຣະມັນ; ໂທລະພາບ CNN; ໄດ້ສົມທົບໂຄສະນາກັບບັນດາສື່ມວນຊົນຂອງຫວຽດນາມ, ຈີນ, ຍີ່ປຸ່ນ, ໄທ ແລະ ສ.ເກົາຫຼີ ຢ່າງກວ້າງຂວາງ, ໄດ້ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວສາກົນ, ຈັດງານລາຕີລາວ (Lao Night); ແລະ ກອງປະຊຸມເຜີຍແຜ່ວຽກງານທ່ອງທ່ຽວລາວ ເພື່ອສົ່ງເສີມ ແລະ ໂຄສະນາການທ່ອງທ່ຽວລາວ ທີ່ ປະເທດຈີນ, ຫວຽດນາມ, ໄທ, ສິງກະໂປ, ຍີ່ປຸ່ນ, ເຢຍຣະມັນ, ຝຣັ່ງ ແລະ ອື່ນໆ. ໄດ້ຈັດການຢ້ຽມຢາມແຫຼ່ງທ່ອງທ່ຽວ ໃຫ້ແກ່ບັນດາສື່ມວນຊົນ ຂອງປະເທດສະມາຊິກອາຊຽນ + 3, ຈັດກິດຈະກຳຂີ່ລົດຖີບ, ຈັດງານຍ່າງເພື່ອສຸຂະພາບ ແລະ ກິດຈະກຳອື່ນໆ.

**5. ການພັດທະນາບຸກຄະລາກອນການທ່ອງທ່ຽວລາວ**

ໄດ້ຈັດຝຶກອົບຮົມໃນບັນດາຫົວຂໍ້ຕ່າງໆ ກ່ຽວກັບການບໍລິການການທ່ອງທ່ຽວ ເຊັ່ນ:

- ການບໍລິການໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ, ການຕ້ອນຮັບນັກທ່ອງທ່ຽວ, ການປຸງແຕ່ງອາຫານທີ່ປອດໄພ.... ຢູ່ເກືອບທຸກໆແຂວງ ມີຜູ້ເຂົ້າຮ່ວມ 450 ກວ່າຄົນ.
- ອົບຮົມຄູຝຶກວິຊາຊີບທ່ອງທ່ຽວລະດັບຊາດ ໄດ້ 8 ຄັ້ງ ມີຜູ້ເຂົ້າຮ່ວມ 184 ຄົນ.
- ອົບຮົມຄູປະເມີນຜົນວິຊາຊີບທ່ອງທ່ຽວລະດັບຊາດ ໄດ້ 8 ຄັ້ງ ມີຜູ້ເຂົ້າຮ່ວມ 183 ຄົນ.
- **ອົບຮົມພະນັກງານນຳທ່ຽວລະດັບຊາດໃນຂອບເຂດທົ່ວປະເທດ ໄດ້ 2,000 ກວ່າຄົນ.**
- ເຜີຍແຜ່ສັນຍາກ່ຽວກັບການຮັບຮູ້ເຊິ່ງກັນ ແລະ ກັນ ດ້ານວິຊາຊີບການທ່ອງທ່ຽວອາຊຽນ ຢູ່ 11 ສະຖາບັນການສຶກສາ ມີຜູ້ເຂົ້າຮ່ວມ 2,500 ກວ່າຄົນ.
- ເຂົ້າຮ່ວມສຳມະນາແລກປ່ຽນວຽກງານການທ່ອງທ່ຽວ ຢູ່ຕ່າງປະເທດ ຈຳນວນ 9 ຄັ້ງ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 180 ຄົນ.
- ສົມທົບກັບສະຖາບັນສຶກສາ ກະຊວງສຶກສາທິການ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ບຳລຸງກໍ່ສ້າງບຸກຄະລາກອນ ຂະແໜງການທ່ອງທ່ຽວຕາມຂັ້ນຕອນຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາ.

**6. ຜົນສຳເລັດໃນການຈັດຕັ້ງປະຕິບັດປີທ່ອງທ່ຽວ ລາວ-ຈີນ 2019 ໃນ 5 ເດືອນຕົ້ນປີ**

ນັບແຕ່ໄດ້ມີການເປີດປີທ່ອງທ່ຽວ ລາວ-ຈີນ 2019 ໃນວັນທີ 25 ມັງກອນ 2019 ຢູ່ ສປປ ລາວ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກໍໄດ້ເປັນເຈົ້າການຈັດຕັ້ງກອງປະຊຸມພົບປະແລກປ່ຽນສອງຝ່າຍ ຊຶ່ງໄດ້ຕົກລົງຈັດ 8 ກິດຈະກຳຢູ່ສອງປະເທດທີ່ຕິດພັນກັບກິດຈະກຳຍ່ອຍຈຳນວນໜຶ່ງ, ສຳລັບຢູ່ ສປປ ລາວ ແມ່ນໄດ້ຈັດຕັ້ງປະຕິບັດບາງກິດຈະກຳສຳເລັດແລ້ວດັ່ງລຸ່ມນີ້:

1) ການຈັດຕັ້ງພິທີເປີດປີທ່ອງທ່ຽວລາວ-ຈີນ, ການສະແດງສິລະປະຮ່ວມ ລາວ-ຈີນ, ການວາງສະແດງຮູບພາບ ແລະ ເທດສະການອາຫານ, ໃນວັນທີ 25 ມັງກອນ 2019 ຢູ່ທີ່ນະຄອນຫຼວງວຽງຈັນ.
2) ສຳເລັດການຈັດຕັ້ງກອງປະຊຸມໂຄສະນາສົ່ງເສີມການທ່ອງທ່ຽວ ລາວ-ຈີນ ແລະ ເປີດສາຍການບິນໃໝ່ຮອບປະຖົມມະເລີກ ລະຫວ່າງ ນະຄອນຫຼວງວຽງຈັນ-ຊຽງໄຮ້-ນະຄອນຫຼວງວຽງຈັນ.
3) ການຈັດພິທີຕ້ອນຮັບຄະນະນັກທ່ອງທ່ຽວຈີນ ຈຳນວນ 1,000 ຄົນ ທີ່ເຂົ້າມາທ່ອງທ່ຽວ ຢູ່ ລາວ.
4) ສົມທົບກັບຝ່າຍຈີນ ຈັດຕັ້ງສັບປະດາວັດທະນະທຳຈີນ ໃນຮູບແບບການສະແດງສິລະປະ ແລະ ງານວາງສະແດງຈາກ ສປ ຈີນ ເນື່ອງໃນໂອກາດຄົບຮອບ 58 ປີຂອງສາຍພົວພັນການທູດລາວ-ຈີນ.

**ຄຽງຄູ່ກັນນີ້, ຝ່າຍຈີນ ກໍໄດ້ເປັນເຈົ້າການຈັດຕັ້ງປະຕິບັດບາງກິດຈະກຳສຳເລັດເຊັ່ນດຽວກັນຄື:**

1) ໃນໂອກາດທີ່ສະຫາຍເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ພ້ອມດ້ວຍການນຳຂັ້ນສູງ ຢ້ຽມຢາມເຄື່ອນໄຫວລັດຖະກິດທີ່ ສປ ຈີນ ຊຶ່ງໄດ້ວາງສະແດງຮູບພາບການທ່ອງທ່ຽວ ແລະ ການສະແດງສິລະປະຂອງລາວ ຮ່ວມກັບຝ່າຍຈີນ ທີ່ເມືອງຟູຈ້ຽນ ນະຄອນຟູໂຈ, ພ້ອມນີ້ຍັງໄດ້ລົງນາມເຊັນບົດບັນທຶກການຮ່ວມມືດ້ານວັດທະນະທຳ ແລະ ທ່ອງທ່ຽວ ລະຫວ່າງ 2 ປະເທດ ທີ່ນະຄອນຫຼວງປັກກິ່ງ.
2) ຄະນະນຳກະຊວງ ຖວທ ສຳເລັດການເຂົ້າຮ່ວມເວທີແລກປ່ຽນຄວາມສີວິໄລອາຊີ, ງານສະແດງແລກປ່ຽນສິລະປະ ແລະ ງານວາງສະແດງການທ່ອງທ່ຽວສາກົນ ທີ່ນະຄອນຫຼວງປັກກິ່ງ.
3) ສອງຝ່າຍ ໄດ້ຈັດງານວາງສະແດງຜົນງານສິລະປະຮູບແຕ້ມຍຸກສະໄໝຂອງນັກຈິດຕະກອນຜູ້ມີຊື່ສຽງຢູ່ແຂວງເສສວນ ແລະ ການສະແດງສິລະປະຮ່ວມ ທີ່ເມືອງຟູຈ້ຽນ.
4) ຈັດກອງປະຊຸມເວທີປຶກສາຫາລືດ້ານການທ່ອງທ່ຽວຂອງບັນດາປະເທດແມ່ນ້ຳຂອງ ປະຈຳປີ 2019 ແລະ ກອງປະຊຸມລະດັບວິຊາການຄັ້ງທີ 43 ທີ່ນະຄອນຕ້າລີ ແຂວງຢຸນໜານ.

ຜ່ານການເຄື່ອນໄຫວວຽກງານຕ່າງໆເຫຼົ່ານັ້ນ, ໄດ້ປະກອບສ່ວນເຮັດໃຫ້ນັກທ່ອງທ່ຽວຈີນເຂົ້າມາທ່ຽວປະເທດເຮົາໃນ 3 ເດືອນຕົ້ນປີ ມີຈຳນວນ 259,205 ຄົນ ເຊິ່ງທຽບໃສ່ໄລຍະດຽວກັນຂອງປີ 2018 ແມ່ນເພີ່ມຂຶ້ນ 16%, ຄາດວ່າໝົດປີ 2019 ຄົງຈະສາມາດບັນລຸຄາດໝາຍທີ່ວາງໄວ້ບໍ່ຕ່ຳກວ່າ 1 ລ້ານເທື່ອຄົນ.

## III. ດ້ານດີ, ດ້ານອ່ອນ ແລະ ສາເຫດທີ່ພາໃຫ້ມີດ້ານດີ ແລະ ດ້ານອ່ອນ

### 1. ດ້ານດີ:

- ຜ່ານການຈັດປີທ່ອງທ່ຽວລາວ 2018 ໄດ້ເຮັດໃຫ້ທຸກພາກສ່ວນ ໃນສັງຄົມລາວ ໄດ້ຮັບຮູ້ ແລະ ມີສ່ວນຮ່ວມໃນການພັດທະນາການທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ຕາມທິດສີຂຽວ, ຍືນຍົງ ແລະ ປະຊາຊົນມີສ່ວນຮ່ວມຢ່າງເປັນຂະບວນຟົດຟື້ນໃນທົ່ວປະເທດ.
- ເຮັດໃຫ້ແຫຼ່ງທ່ອງທ່ຽວ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຂອງປະເທດເຮົາ, ໄດ້ປັບປຸງແກ້ໄຂບັນດາຂໍ້ຫຍຸ້ງຍາກ ທີ່ເປັນສິ່ງອັດຕັນການທ່ອງທ່ຽວ ໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ.
- ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ປະຊາຊົນລາວບັນດາເຜົ່າມີວຽກເຮັດງານທຳ ແລະ ມີລາຍຮັບເພີ່ມຂຶ້ນ ເພື່ອຫຼຸດຜ່ອນຄວາມທຸກຍາກ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ.

### 2. ດ້ານອ່ອນ:

- ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ໃນຂົງເຂດວຽກງານການທ່ອງທ່ຽວ ຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກງານ. ສິ່ງທີ່ມີແລ້ວກໍ່ບໍ່ທັນໄດ້ຮັບການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ແລະ ເລິກເຊິ່ງເທົ່າທີ່ຄວນ ຈຶ່ງເຮັດໃຫ້ຄວາມເຂົ້າໃຈ ແລະ ການປະສານງານຕ່າງໆ ຍັງບໍ່ທັນມີຄວາມເປັນເອກະພາບ ແລະ ພົບກັບຄວາມຫຍຸ້ງຍາກຫຼາຍຢ່າງ ເຊັ່ນ: ການເກັບຄ່າບໍລິການ, ຄ່າທຳນຽມຍັງບໍ່ມີຄວາມເປັນເອກະພາບ, ການເອື້ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວໃນການເຂົ້າ-ອອກຜ່ານດ່ານ, ການເດີນທາງໄປຫາແຫຼ່ງທ່ອງທ່ຽວ ແລະ ການເຂົ້າທ່ຽວຊົມແຫຼ່ງທ່ອງທ່ຽວຕ່າງໆ ຍັງຫຍຸ້ງຍາກ ແລະ ບໍ່ທັນໄດ້ຮັບການປັບປຸງດີໄວເທົ່າທີ່ຄວນ.
- ດ້ານພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກ ແລະ ແຫຼ່ງທ່ອງທ່ຽວຕ່າງໆ ບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ ເປັນຕົ້ນແມ່ນເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວຫຼາຍແຫ່ງຍັງຫຍຸ້ງຍາກ ແລະ ຫຼາຍແຫ່ງເຂົ້າເຖິງໄດ້ແຕ່ລະດູແລ້ງ, ເສັ້ນທາງເຊື່ອມຕໍ່ທາງບົກ ແລະ ສາຍການບິນໂດຍກົງກັບຕະຫຼາດເປົ້າໝາຍທາງໄກ ຍັງມີໜ້ອຍ, ກິດຈະກຳການທ່ອງທ່ຽວບໍ່ມີຄວາມຫຼາກຫຼາຍ ແລະ ຜະລິດຕະພັນທີ່ໃໝ່ໆ ກໍ່ຍັງມີໜ້ອຍ.
- ການເປັນເຈົ້າການຂອງບັນດາຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນຈຳນວນໜຶ່ງຍັງບໍ່ທັນເປັນເຈົ້າພາບທີ່ດີ ເຊັ່ນ: ການຕ້ອນຮັບ, ການບໍລິການບາງຄັ້ງຍັງສວຍໂອກາດຂຶ້ນລາຄາໃນງານເທດສະການຕ່າງໆ, ການຮັກສາຄວາມສະອາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.
- ການໂຄສະນາບໍ່ມີຄວາມຫຼາກຫຼາຍ, ແລະ ບໍ່ກວ້າງຂວາງ ເປັນຕົ້ນການຈັດກິດຈະກຳ ແລະ ງານເທດສະການຢູ່ພາຍໃນປະເທດ, ລວມໄປເຖິງການໂຄສະນາໂດຍນຳໃຊ້ສື່ຕ່າງໆ ແລະ ຍັງບໍ່ທັນເຂົ້າເຖິງກຸ່ມເປົ້າໝາຍຢ່າງທົ່ວເຖິງ.
- ບຸກຄະລາກອນ ແລະ ງົບປະມານມີຂອບເຂດຈຳກັດ ຍັງບໍ່ທັນສາມາດຕອບສະໜອງໃຫ້ການພັດທະນາວຽກງານທ່ອງທ່ຽວ ໄດ້ເທົ່າທີ່ຄວນ.

### 3. ສາເຫດທີ່ພາໃຫ້ດ້ານດີ:

- ລັດຖະບານໄດ້ຖືເອົາປີທ່ອງທ່ຽວລາວເປັນວຽກຈຸດສຸມ ແລະ ເປັນວາລະແຫ່ງຊາດ ເຮັດໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຢ່າງເປັນຂະບວນ ແລະ ມີຄວາມຮັບຜິດຊອບສູງ ແລະ ໄດ້ມີຄວາມເຂົ້າໃຈ ຕໍ່ວຽກງານທ່ອງທ່ຽວຫລາຍຂຶ້ນ.
- ຂະແໜງການທ່ອງທ່ຽວ ໄດ້ເອົາໃຈໃສ່ປະສານງານກັບບັນດາຂະແໜງການ, ອໍານາດການປົກຄອງທ້ອງຖິ່ນ, ຜູ້ປະກອບການ ແລະ ປະຊາຊົນ ເປັນເຈົ້າການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ເພື່ອຊຸກຍູ້ການທ່ອງທ່ຽວໃຫ້ເປັນຂະບວນການຟົດຟື້ນ ໃນທົ່ວປະເທດ.
- ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໄດ້ໃຫ້ຄວາມສົນໃຈ ແລະ ເຂົ້າຮ່ວມ ຕໍ່ບັນດາກິດຈະກໍາທີ່ໄດ້ຈັດຂຶ້ນ ນັບມື້ນັບເພີ່ມຂຶ້ນ.
- ໄດ້ບໍາລຸງ ກໍ່ສ້າງບຸກຄະລາກອນດ້ານການທ່ອງທ່ຽວ ຂອງລາວເຮົາ ລວມທັງຜູ້ປະກອບການ, ນັກວິຊາການ ໃຫ້ມີປະລິມານ ແລະ ຄຸນນະພາບດີຂຶ້ນ.
- ສື່ມວນຊົນລາວ ແລະ ຕ່າງປະເທດ ໄດ້ໃຫ້ການຮ່ວມມືໃນການໂຄສະນາການທ່ອງທ່ຽວລາວ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ.

**4. ສາຍເຫດທີ່ພາໃຫ້ມີດ້ານອ່ອນ**

- ສະພາບການສາກົນ ແລະ ພາກພື້ນ ບາງຄັ້ງຄາວຍັງບໍ່ທັນເອື້ອອໍານວຍໃຫ້ແກ່ການເຊື່ອມໂຍງດ້ານການທ່ອງທ່ຽວດີເທົ່າທີ່ຄວນ.
- ພ້ອມກັນນັ້ນ ໃນປີຜ່ານມາ, ປະເທດເຮົາໄດ້ເກີດມີໄພພິບັດທີ່ຮ້າຍແຮງ ໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນເຫດການທີ່ເກີດຂຶ້ນທີ່ເມືອງສະໜາມໄຊ, ແຂວງອັດຕະປື ຊຶ່ງໄດ້ສົ່ງຜົນກະທົບຕໍ່ຊີວິດຊັບສິນຂອງປະຊາຊົນ ແລະ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຫຼາຍພໍສົມຄວນ.
- ສະພາບເສດຖະກິດພາຍໃນຍັງມີຄວາມຫຍຸ້ງຍາກ ຫືອໜ່ອຍການຜະລິດພາຍໃນຍັງມີໜ້ອຍ, ການນໍາເຂົ້າເຄື່ອງອຸປະໂພກ-ບໍລິໂພກຈາກຕ່າງປະເທດ ຍັງມີລັກສະນະໜັກໜ່ວງ.
- ການປັບປຸງກົນໄກການປະສານງານລະຫວ່າງສູນກາງ, ທ້ອງຖິ່ນ, ຂະແໜງການຕ່າງໆຂອງພາກລັດ ແລະ ພາກທຸລະກິດ ກໍ່ຍັງບໍ່ທັນດີເທົ່າທີ່ຄວນ ຍັງພາໃຫ້ເປັນສິ່ງອັດຕັນການ ທ່ອງທ່ຽວຂອງລາວເຮົາຄົງຄ້າງຢູ່ຈໍານວນໜຶ່ງ.

5. **ບົດຮຽນທີ່ຖອດຖອນໄດ້:**

- ບັນດາຂະແໜງການ, ອໍານາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນລາວບັນດາເຜົ່າ ສືບຕໍ່ມີຄວາມຮັບຮູ້ ແລະ ເຊື່ອມຊຶມຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ທີ່ຖືເອົາການທ່ອງທ່ຽວເປັນຂະແໜງພື້ນຖານອັນໜຶ່ງໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ແລະ ພ້ອມກັນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດຢ່າງຈົບງາມ.
- ສືບຕໍ່ສ້າງ ແລະ ປັບປຸງນິຕິກໍາ, ກົນໄກໃນການປະສານສົມທົບລະຫວ່າງຂະແໜງການ ແລະ ທ້ອງຖິ່ນໃຫ້ມີຄວາມເປັນເອກະພາບ ແລະ ກົມກຽວກັນ ໃນການພັດທະນາ, ຄຸ້ມຄອງ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດເຮົາໃຫ້ມີຄວາມຍືນຍົງ ແລະ ປະຊາຊົນມີສ່ວນຮ່ວມ.
- ສືບຕໍ່ເພີ່ມທະວີການລົງທຶນຈາກພາກລັດ ແລະ ສັງຄົມທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງບຸກຄະລາກອນ, ພື້ນຖານໂຄງລ່າງ ສິ່ງອໍານວຍຄວາມສະດວກ ແລະ ແຫຼ່ງທ່ອງທ່ຽວໃນທົ່ວປະເທດໃຫ້ໄດ້ຕາມມາດຕະຖານການທ່ອງທ່ຽວແຫ່ງຊາດ, ພາກພື້ນ ແລະ ສາກົນ.
- ສືບຕໍ່ເອົາໃຈໃສ່ໂຄສະນາເຜີຍແຜ່ ແລະ ປະສານສົມທົບກັບບັນດາອົງການທ່ອງທ່ຽວໃນພາກພື້ນ ແລະ ສາກົນ ຍາດແຍ່ງເອົາການສະໜັບສະໜູນແລກປ່ຽນບົດຮຽນ, ປະສົບການ ແລະ ການຮ່ວມມືເພື່ອສ້າງການທ່ອງທ່ຽວຂອງລາວ ໃຫ້ເຊື່ອມໂຍງກັບສາກົນ.

**IV. ແຜນວຽກຈຸດສຸມໃນຕໍ່ໜ້າ**

1. ສູ້ຊົນເຮັດໃຫ້ມີນັກທ່ອງທ່ຽວເຂົ້າມາລາວ ມີຈຳນວນ 4,5 ລ້ານເທື່ອຄົນ ແລະ ສ້າງລາຍຮັບໃຫ້ໄດ້ຫຼາຍກ່ວາ 700 ລ້ານໂດລາສະຫະລັດ ຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ.
2. ສືບຕໍ່ສ້າງ ແລະ ປັບປຸງແຫຼ່ງທ່ອງທ່ຽວຢ່າງມີຈຸດສຸມໃຫ້ໄດ້ແຂວງລະ 5 ແຫ່ງ.
3. ສືບຕໍ່ສ້າງ, ປັບປຸງນິຕິກຳຕ່າງໆ ແລະ ໂຄສະນາເຜີຍແຜ່, ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍກ່ຽວກັບວຽກງານການທ່ອງທ່ຽວໃຫ້ກ້ວາງຂວາງ ແລະ ເລິກເຊິ່ງ.
4. ສືບຕໍ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ທ້ອງຖິ່ນ ທັງພາກລັດ ແລະ ພາກທຸລະກິດ ປັບປຸງກົນໄກການປະສານງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ.
5. ສືບຕໍ່ລະດົມແຫຼ່ງທຶນຈາກພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເພື່ອປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງໂດຍສະເພາະເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວ, ສິ່ງອຳນວຍຄວາມສະດວກພາຍໃນແຫຼ່ງທ່ອງທ່ຽວ, ສະຖານທີ່ບໍລິການນັກທ່ອງທ່ຽວຕ່າງໆ ໃຫ້ດີຂຶ້ນ.
6. ຕັ້ງໜ້າໂຄສະນາ ເຜີຍແຜ່ການທ່ອງທ່ຽວລາວໃນຫຼາຍຮູບແບບຕໍ່ພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ.
7. ເພີ່ມທະວີການຍາດແຍ່ງ ປຸກລະດົມ ແຫຼ່ງທຶນຈາກອົງການ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາບຳລຸງ ແລະ ກໍ່ສ້າງບຸກຄະລາກອນກໍ່ຄືວຽກງານການທ່ອງທ່ຽວຂອງລາວເຮົາໃຫ້ພຽງພໍ ແລະ ໄດ້ມາດຕະຖານຕາມລະບຽບການ ແລະ ຫຍັບໃກ້ເຂົ້າສູ່ມາດຕະຖານສາກົນ.
8. ສຸມໃສ່ຈັດຕັ້ງປະຕິບັດບັນດາກິດຈະກຳ ປີທ່ອງທ່ຽວ ລາວ-ຈີນ ຕາມການຕົກລົງຂອງທັງ 2 ຝ່າຍ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ.

**ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການດັ່ງກ່າວ:** ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈະສືບຕໍ່ປະສານສົມທົບກັບບັນດາກະຊວງການ, ອຳນາດການປົກຄອງທ້ອງຖິ່ນ, ນັກທຸລະກິດ ຜູ້ປະກອບການ ແລະ ປະຊາຊົນລາວບັນດາເຜົ່າ ພ້ອມກັນຈັດຕັ້ງປະຕິບັດ 7 ມາດຕະການ ແລະ 5 ທິດຊີ້ນຳຂອງສະພາແຫ່ງຊາດທີ່ໄດ້ກຳນົດໄວ້ໃນມະຕິ ເລກທີ 081/ສພຊ, ລົງວັນທີ 17 ພະຈິກ 2017 ໃຫ້ໄດ້ຮັບຜົນສຳເລັດຢ່າງເປັນຮູບປະທຳ.

**ຮຽນທ່ານປະທານ,ຄະນະປະທານ ແລະ ບັນດາສະມາຊິກສະພາແຫ່ງຊາດທີ່ນັບຖື !**

ຂ້າພະເຈົ້າຕາງໜ້າໃຫ້ແກ່ກະຊວງ ຖວທ ຂໍສະເໜີມາຍັງບັນດາສະມາຊິກສະພາແຫ່ງຊາດ ຈົ່ງສືບຕໍ່ໃຫ້ຄວາມຮ່ວມມື, ປະກອບຄຳຄິດຄຳເຫັນ ແລະ ຕິດຕາມຊຸກຍູ້ຊີ້ນຳວຽກງານ ຖວທ ໃຫ້ມີຄວາມເຂັ້ມແຂງ ແລະ ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ ເພື່ອເຮັດໃຫ້ວຽກງານບັນລຸຕາມຄາດໝາຍວາງໄວ້.

ສຸດທ້າຍນີ້, ຂໍອວຍພອນໄຊໃຫ້ທ່ານປະທານ, ບັນດາຄະນະປະທານ ແລະ ສະມາຊິກສະພາແຫ່ງຊາດທຸກໆທ່ານ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ, ຂໍອວຍພອນໃຫ້ກອງປະຊຸມສະ ໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII ປະສົບຜົນສຳເລັດຢ່າງຈົບງາມ.

**ຂໍຂອບໃຈ.**

**ລັດຖະມົນຕີ**